**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງບໍລິຄໍາໄຊ

ພະແນກໂຍທາທິການ ແລະ ຂົນສົ່ງ

ເລກທີ...1578.../ຍທຂ

ບໍລິຄໍາໄຊ, ວັນທີ...06 ເມສາ 2026...

**ຊື່ໂຄງການ: ວຽກບູລະນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດປີ 2026.**

# ໜັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ

**ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄໍາໄຊ,** ໄດ້ຮັບການຊີ້ນໍາຈາກຂັ້ນເທິງໃນການຈັດຕັ້ງປະຕິບັດ ການປະມູນຈັດຊື້-ຈັດຈ້າງ ໂຄງການ : ວຽກບູລະນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດເລກ 8 ກມ 66+000 - ກມ 132+000 (ແຕ່ ບ້ານໂພນຕານ ຫາ ຊາຍແດນ ສສຫວຽດນາມ) ລວງຍາວ 66 ກມ;

1. ດ້ວຍການດໍາເນີນການປະມູນເປີດກວ້າງພາຍໃນ ສໍາລັບບ້ວງເງິນທີ່ຈະຊໍາລະສະສາງ ແມ່ນນໍາໃຊ້ງົບປະມານກອງທຶນທາງໄດ້ຮັບອະນຸມັດ ປະຈໍາປີ 2026;
2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ ຂໍເຊີນບັນດາບໍລິສັດ ທີ່ມີໃບອານຸຍາດດໍາເນີນທຸລະກິດດ້ານການກໍ່ສ້າງຂົວ-ທາງ ທີ່ມີຄວາມສົນໃຈ, ເຂົ້າຮ່ວມປະມູນໂຄງການດັ່ງກ່າວນີ້, ໄລຍະການກໍ່ສ້າງສ້ອມແປງແມ່ນ 12 ເດືອນ;
3. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ ຢູ່ໃນກົດໝາຍ ວ່າດ້ວຍການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ ລົງວັນທີ 13 ກຸມພາ 2019;
4. ການປະມູນນີ້ ແມ່ນອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄວາມເໝາະສົມ, ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບວຽກທີ່ຈະດໍາເນີນການກໍ່ສ້າງ ຢູ່ໃນຂອບເຂດ ແຂວງບໍລິຄໍາໄຊ ຫຼື ທົ່ວປະເທດ;
5. ບໍລິສັດທີ່ມີຄວາມເໝາະສົມສົນໃຈ ສາມາດຕິດຕໍ່ພົວພັນ ແລະ ຊື້ເອກະສານປະມູນໄດ້ທີ່ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ ຂະແໜງຂົວທາງ ຢູ່ບ້ານທົ່ງໄຊ ເມືອງປາກຊັນ ແຂວງບໍລິຄໍາໄຊ ໂທລະສັບ/ແຟັກ: 054-212091 ແລະ ຂະແໜງການຈັດຊື້-ຈັດຈ້າງພະແນກການເງິນແຂວງ ໃນວັນ ແລະ ເວລາລັດຖະການ: ວັນຈັນ - ວັນສຸກ, ເວລາ 8:00-12:00ໂມງ ແລະ 13:00-16:00ໂມງ ໂດຍໃຫ້ຍື່ນໜັງສືສະເໜີຫາ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ ເລີ່ມແຕ່ວັນທີ 6 ເມສາ 2026 ເປັນຕົ້ນໄປ ໃນລາຄາ **1.000.000 ກີບ/ຊອງ**, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງ ໃນເວລາ ຫລື ກ່ອນເວລາ 11:00 ໂມງ ຂອງວັນທີ 21 ພຶດສະພາ 2026 ຊອງປະມູນໃດ ທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ.
7. ກອງປະຊຸມ ກ່ອນການຍື່ນຊອງປະມູນ ແລະ ເຂົ້າຢັ້ງຢາມພາກສະໜາມ (site visit) ຈະໄດ້ຈັດຂຶ້ນໃນວັນທີ 12 ພຶດສະພາ 2026, ເວລາ 8:30 ໂມງເຊົ້າ, ການເປີດຊອງປະມູນ ຈະໄດ້ຈັດຂຶ້ນທີ່ ຫ້ອງປະຊຸມຂະແໜງຂົວທາງ ພະແນກ

ໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ, ທາງ 21 ບ້ານທົ່ງໄຊ, ເມືອງປາກຊັນ ແຂວງບໍລິຄໍາໄຊ ໃນເວລາ 11:00 ໂມງ ຂອງວັນ 21 ພຶດສະພາ 2026 ໂດຍຊ່ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນ ທີ່ສົນໃຈເຂົ້າຮ່ວມນໍາ;

8. ເອກະສານປະມູນ ຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນມາພ້ອມໃນມູນຄ່າບໍ່ຫຼຸດ 2 % ຂອງມູນຄ່າປະມູນໂດຍໜັງສືຄໍ້າປະກັນການປະມູນ ຕ້ອງແມ່ນໜັງສືຄໍ້າປະກັນຂອງທະນາຄານ ທີ່ຖືກຕ້ອງກັບແບບຟອມ ທີ່ໄດ້ກໍານົດໄວ້ຢູ່ໃນເອກະສານປະມູນ.

**ເຊັນແທນຫົວໜ້າພະແນກ**

**ຮອງຫົວໜ້າພະແນກ**

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ

ປອ ສົມນຶກ ແກ້ວມະນີ

ຕິດຕໍ່:

1. ທ່ານ ກ້ອນນວນຄໍາ ຈັນທະມີນາວົງ ໂທ: 020 22117888
2. ທ່ານ ຄໍາປະເສີດ ພົນທະວົງ ຈະແໜງຈັດຊື້-ຈັດຈ້າງ ພະແນກການເງິນແຂວງ ໂທ: 020 28870055